ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 102 /ທຄຕລ 2021

ນະຄອນຫຼວງວຽງຈັນ, ວັນທີ: 07 DEC 2021

# ໜັງສືແຈ້ງເຊີນປະມູນ

## ຄັດເລືອກບໍລິສັດກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2022

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດກວດສອບ ເພື່ອເຂົ້າຮ່ວມສະເໜີລາຄາຄ່າບໍລິການກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2022, ໂດຍອະນຸຍາດໃຫ້ທຸກໆບໍລິສັດກວດສອບ ທີ່ມີຄຸນນະວຸດທິເໝາະສົມ ແລະ ຄົບເງື່ອນໄຂ ເຂົ້າຮ່ວມ ດັ່ງນີ້:

- ເປັນບໍລິສັດທີ່ໄດ້ມາດຕະຖານ ແລະ ເປັນທີ່ຍອມຮັບຂອງສາກົນ.
- ມີໃບອະນຸຍາດດຳເນີນທຸລະກິດຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ.
- ໄດ້ຮັບການອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໃຫ້ສາມາດກວດສອບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ.

**ເງື່ອນໄຂຂອງບໍລິສັດ ກວດສອບ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **<u>ເອກະສານຊອງທີ 1 (ບໍ່ປິດຊອງ):</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດບໍລິສັດ ກວດສອບ, ຕ້ອງມີວິຊາການສະເພາະ ແລະ ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2020.
2. ບໍລິສັດກວດສອບທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂຄົບຖ້ວນຕາມທີ່ລະບຸໄວ້ຂ້າງເທິງສາມາດ ເຂົ້າມາພົວພັນເອົາຂໍ້ມູນ (TOR) ໄດ້ທີ່ ທຄຕລ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C, ຫ້ອງຂາອອກ-ຂາເຂົ້າ, ເລີ່ມແຕ່ **ວັນທີ 08/12/2021** ຫາວັນທີ **15/12/2021** ເວລາ 08:30 ໂມງ ຫາເວລາ 15:30 ໂມງ.
3. ກຳນົດຍື່ນຊອງລາຍລະອຽດໜ້າວຽກ ແລະ ຂໍ້ມູນຕ່າງໆ ໃນວັນພະຫັດ, ວັນທີ **06/01/2022 ກ່ອນເວລາ 11:00 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ຕຶກ C.

❖ **<u>ເອກະສານຊອງທີ 2 (ປິດຊອງ):</u>**

1. ໃບສະເໜີລາຄາໃຫ້ລະບຸລາຄາ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນພະຫັດ ວັນທີ **13/01/2022 ເວລາ 09:30** ໂມງ ແມ່ນມື້ເປີດຊອງປະມູນ ໃຫ້ບໍລິສັດຜູ້ບໍລິການຕ້ອງຖືຊອງໃບສະເໜີລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າທີ່ໄດ້ຮັບມອບສິດຢ່າງເປັນລາຍລັກອັກສອນເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ຕຶກ C.
3. ບໍລິສັດຜູ້ບໍລິການຕ້ອງລະບຸລາຍລະອຽດ, ເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຂ້າງເທິງນັ້ນ.

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

4. ບໍລິສັດ ຜູ້ບໍລິການຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ແລະ ໜັງສືຄ້ຳປະກັນດັ່ງກ່າວຕ້ອງອອກໂດຍທະນາຄານພາຍໃນປະເທດລາວ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 13/02/2022)** ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

<u>**ໝາຍເຫດ:**</u>

- ທຄຕລ ຂໍສະຫງວນສິດ ປະຕິເສດບໍລິສັດຜູ້ບໍລິການທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
- ການຄັດເລືອກບໍ່ໄດ້ກຳນົດເງື່ອນໄຂເລືອກຈາກລາຄາພຽງຢ່າງດຽວ, ແຕ່ຈະອີງໃສ່ປະສົບການ ແລະ ຄວາມຊຳນານງານ ແລະ ອື່ນໆທີ່ກ່ຽວຂ້ອງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ບໍລິສັດຜູ້ບໍລິການທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ຊະນະການປະມູນຕ້ອງໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.

**ການຊຳລະຄ່າບໍລິການຈະຈ່າຍເປັນງວດ ອີງຕາມໜ້າວຽກທີ່ສຳເລັດ ພາຍຫຼັງການໃຫ້ບໍລິການແຕ່ລະຄັ້ງ ແລະ ໄດ້ຮັບການຢັ້ງຢືນຈາກ ທຄຕລ.**

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ຄຳພຸດ ສິດທິລາດ

ສອບຖາມຂໍ້ມູນເພີ່ມເຕີມ:
ທ່ານ ນ. ມາລິດາ ຈຳລອງເພັດ ໂທ 020 5679 6265